

## ຂ້າພະເຈົ້າຈະແນ່ໃຈໄດ້ແນວໃດ ວ່າເລື່ອງລາວຂອງຕົນຈະໄດ້ຮັບການຮັບຟັງ?

- ໃຫ້ຄວາມຮ່ວມມື ແລະ ແຈ້ງຊື່ພະນັກງານຮັບຜິດຊອບກໍລະນີ ແລະ ຂໍ້ມູນຕິດຕໍ່ຂອງຜູ້ທີ່ສາມາດໃຫ້ຂໍ້ມູນເພີ່ມຕື່ມໄດ້. ອາດຈະຕ້ອງມີການຍິນຍອມເຫັນດີເປັນລາຍລັກອັກສອນໃນບາງກໍລະນີ.
- ອະນຸຍາດໃຫ້ພະນັກງານຮັບຜິດຊອບກໍລະນີເຂົ້າໄປໃນເຮືອນຂອງທ່ານ ເພື່ອໃຫ້ເຂົາເຈົ້າຈະໄດ້ເຂົ້າໃຈສະຖານະການຂອງທ່ານໄດ້ດີຂຶ້ນ.
- ເຂົ້າຮ່ວມກອງປະຊຸມທັງໝົດທີ່ຈັດຂຶ້ນ ເພື່ອສົນທະນາກ່ຽວກັບກໍລະນີດັ່ງກ່າວ ຫຼື ລູກຂອງທ່ານ.
- ຖາມຄຳຖາມຕ່າງໆ ກ່ຽວກັບຂະບວນການ ແລະ ສິ່ງທີ່ທ່ານສາມາດເຮັດໄດ້.
- ຢ່າລືມພາລູກຂອງທ່ານໄປພົບແພດຕາມນັດໝາຍ ຫຼື ພົບຜູ້ຊ່ຽວຊານເມື່ອມີການຮ້ອງຂໍ.
- ເຮັດໃຫ້ແນ່ໃຈວ່າ ພະນັກງານຮັບຜິດຊອບກໍລະນີໄດ້ອັບເດດການປ່ຽນແປງຕ່າງໆ ເຊັ່ນ: ທີ່ຢູ່ໃໝ່, ມີບຸກຄົນໜ້າໃໝ່ມາອາໄສຢູ່ໃນເຮືອນ ຫຼື ຂໍ້ມູນຕິດຕໍ່ໃໝ່.
- ຖາມກ່ຽວກັບແຫຼ່ງຊັບພະຍາກອນ. ໃນບາງເຂດປົກຄອງ, ຈະມີຜູ້ຊ່ວຍເຫຼືອພໍ່ແມ່ ເພື່ອຊ່ວຍເຫຼືອທ່ານໃນລະຫວ່າງການສືບສວນ.
- ແຈ້ງໃຫ້ພະນັກງານຮັບຜິດຊອບກໍລະນີຜູ້ອື່ນ ທີ່ມີຄວາມຮູ້ກ່ຽວກັບສະຖານະການດັ່ງກ່າວ. ພະນັກງານຮັບຜິດຊອບກໍລະນີຍິ່ງໄດ້ຮັບຂໍ້ມູນຫຼາຍເທົ່າໃດ ຜູ້ກ່ຽວກໍຍິ່ງຈະສາມາດຕັດສິນໃຈໄດ້ດີຂຶ້ນເທົ່ານັ້ນ.



## ຂ້າພະເຈົ້າຕິດຕໍ່ຫາໃຜໄດ້ ຖ້າຂ້າພະເຈົ້າມີຄວາມເປັນຫ່ວງກ່ຽວກັບເລື່ອງຂອງຕົນ?

ຖ້າທ່ານມີຄຳຮ້ອງທຸກ ຫຼື ຂໍ້ກັງວົນຕ່າງໆ, ກະລຸນາຕິດຕໍ່ພະນັກງານຮັບຜິດຊອບກໍລະນີ ຫຼື ຫົວໜ້າສາຍງານຂອງເຂົາທ່ານ.

________________________________________

________________________________________

ຖ້າຂໍ້ກັງວົນຕ່າງໆຂອງທ່ານຍັງບໍ່ທັນໄດ້ຮັບການແກ້ໄຂ, ທ່ານສາມາດໂທຫາຜູ້ບໍລິຫານປະຈຳພື້ນທີ່ໃນທ້ອງຖິ່ນຂອງທ່ານ.

________________________________________

________________________________________

ທ່ານສາມາດໂທຫາ Office of Constituent Relations (ຫ້ອງການປະຊາສຳພັນເພີ່ມເຕີມ) ໄດ້ທີ່ເບີ

1-800-723-4831 ເພື່ອຂໍຄວາມຊ່ວຍເຫຼືອໄດ້ທຸກເວລາ ຫຼື

ທ່ານສາມາດໂທຫາ Office of the Family & Children's Ombuds (ຫ້ອງການເຈົ້າໜ້າທີ່ຮັບຜິດຊອບກວດກາຄອບຄົວ ແລະ ເດັກ)* ໄດ້ທີ່ເບີ 1-800-571-7321.

**ໜ່ວຍງານນີ້ແຍກມາຈາກ DCYF. ໜ່ວຍງານນີ້ຈະສືບສວນຂໍ້ກັງວົນຕ່າງໆ ກ່ຽວກັບ DCYF.*

*ຖ້າທ່ານຕ້ອງການສຳເນົາຂອງເອກະສານນີ້ ໃນຮູບແບບທາງເລືອກ ຫຼື ພາສາອື່ນໆ, ກະລຸນາຕິດຕໍ່ ຝ່າຍປະຊາສຳພັນຂອງ DCYF (DCYF Constituent Relations) ທີ່ເບີ (1-800-723-4831 | 360-902-8060, **ConstRelations@dcyf.wa.gov**).*

DCYF PUBLICATION CWP_0083 LA (08-2021) Laotian

# ການສືບສວນຂອງ Child Protective Services (ພະແນກປ້ອງກັນເດັກນ້ອຍ, CPS)

*ການດູແລເດັກນ້ອຍໃຫ້ມີຄວາມປອດໄພ ໃນຂະນະທີ່ພວມສ້າງຄວາມເຂັ້ມແຂງໃຫ້ແກ່ຄອບຄົວ*



Washington State Department of
CHILDREN, YOUTH & FAMILIES



## ການສືບສວນຂອງ CPS ແມ່ນຫຍັງ?

ການສືບສວນຂອງ CPS ແມ່ນການຕອບໂຕ້ຕໍ່ການກ່າວຫາວ່າ ເດັກຖືກລ່ວງລະເມີດ ຫຼື ຖືກປ່ອຍປະລະເລີຍ. ເຊິ່ງເປັນຄວາມພະຍາຍາມທີ່ມີຄວາມລະອຽດ ແລະ ຍຸຕິທໍາ ເພື່ອຮຽນຮູ້ເຖິງຂໍ້ເທັດຈິງຕ່າງໆ ວ່າໄດ້ມີການລ່ວງລະເມີດ, ການປ່ອຍປະລະເລີຍ ຫຼື ການປະເດັກນ້ອຍຖິ້ມເກີດຂຶ້ນແທ້ ຫຼື ບໍ່, ເກີດຂຶ້ນຄືແນວໃດ ຫຼື ການກະທໍາດັ່ງກ່າວນີ້ ເຮັດໃຫ້ເດັກນ້ອຍມີຄວາມສ່ຽງຕໍ່ການຖືກລ່ວງລະເມີດ ຫຼື ການປ່ອຍປະລະເລີຍໃນອະນາຄົດ ຫຼື ບໍ່ ແລະ ເດັກນ້ອຍມີຄວາມປອດໄພ ຫຼື ບໍ່. ນີ້ແມ່ນເຮັດສໍາເລັດໂດຍການສອບຖາມ ແລະ ການສໍາພາດ ຈາກຫຼາຍໆແຫຼ່ງຂໍ້ມູນທີ່ກ່ຽວຂ້ອງ.

## ເປັນຫຍັງຂ້າພະເຈົ້າຈຶ່ງໄດ້ຮັບການສືບສວນ?

- ພະແນກເດັກນ້ອຍ, ຊາວໜຸ່ມ ແລະ ຄອບຄົວ (Department of Children, Youth, and Families) (DCYF) ໄດ້ຮັບລາຍງານເຖິງຂໍ້ກັງວົນກ່ຽວກັບຄວາມປອດໄພຂອງລູກຂອງທ່ານ.
- ລາຍງານດັ່ງກ່າວຖືກກັບຄໍານິຍາມທາງດ້ານກົດໝາຍຂອງການລ່ວງລະເມີດ ແລະ ການປ່ອຍປະລະເລີຍເດັກ (RCW 26.44.020).
- ລາຍງານດັ່ງກ່າວ ໄດ້ສະແດງໃຫ້ເຫັນວ່າ ການກ່າວຫາແມ່ນມີຄວາມສ່ຽງສູງປານກາງ ຫຼື ມີຄວາມສ່ຽງສູງ ຫຼື ອາດຈະເປັນອັນຕະລາຍຕໍ່ກັບລູກຂອງທ່ານໃນທັນທີ.
- DCYF ຕ້ອງການເຮັດວຽກກັບທ່ານເພື່ອດູແລລູກຂອງທ່ານໃຫ້ມີຄວາມປອດໄພ.

## ຄໍານິຍາມຂອງການລ່ວງລະເມີດ ແລະ ການປ່ອຍປະລະເລີຍເດັກນ້ອຍ ແມ່ນຫຍັງ?

ການລ່ວງລະເມີດ ຫຼື ການປ່ອຍປະລະເລີຍເດັກນ້ອຍ ໝາຍເຖິງການບາດເຈັບ, ການລ່ວງລະເມີດທາງເພດ ຫຼື ການສະແຫວງຫາຜົນປະໂຫຍດທາງເພດຈາກເດັກນ້ອຍໂດຍບຸກຄົນໃດໜຶ່ງ ພາຍໃຕ້ເງື່ອນໄຂທີ່ເປັນການບົ່ງບອກວ່າ ມີຄວາມເປັນອັນຕະລາຍຕໍ່ສຸຂະພາບ, ຄວາມສະຫວັດດີພາບ ຫຼື ຄວາມປອດໄພຂອງເດັກນ້ອຍ ຫຼື ການປະຕິບັດທີ່ເປັນການລະເລີຍ ຫຼື ການທາລຸນເດັກ. ເບິ່ງພາກ 110-30 WAC ສໍາລັບລາຍລະອຽດເພີ່ມຕື່ມທີ່ມີຢູ່ທາງອອນລາຍທີ່
**https://apps.leg.wa.gov/WAC/default.aspx?cite=110-30&full=true**.

## ສິ່ງທີ່ຄາດຫວັງວ່າຈະໄດ້ຮັບຈາກການສືບສວນແມ່ນຫຍັງ?

- DCYF ໃຫ້ຄວາມສໍາຄັນຢ່າງຫຼວງຫຼາຍຕໍ່ຫົວໜ່ວຍຄອບຄົວ ແລະ ເຮັດວຽກເພື່ອດູແລເດັກນ້ອຍຢູ່ໃນເຮືອນຂອງເຂົາເຈົ້າໃຫ້ເຂົາເຈົ້າສາມາດຢູ່ທີ່ນັ້ນໄດ້ຢ່າງປອດໄພ. ຄວາມປອດໄພຂອງລູກຂອງທ່ານ ແມ່ນມີຄວາມສໍາຄັນທີ່ສຸດ ແລະ ພະນັກງານຮັບຜິດຊອບກໍລະນີ ຈະເຮັດວຽກກັບທ່ານຢ່າງໃກ້ຊິດ ເພື່ອຊອກຫາຫົນທາງໃນການດູແລລູກຂອງທ່ານໃຫ້ມີຄວາມປອດໄພຢູ່ໃນເຮືອນຂອງທ່ານ, ຖ້າເປັນໄປໄດ້.
- ທ່ານ ແລະ ລູກຂອງທ່ານ ຄວນໄດ້ຮັບການປະຕິບັດຕໍ່ຢ່າງຍຸຕິທໍາ ແລະ ມີຄວາມເຄົາລົບຕະຫຼອດເວລາ.
- ໃນຖານະທີ່ເປັນພໍ່ແມ່, ຜູ້ປົກຄອງຕາມກົດໝາຍ ຫຼື ຜູ້ຢູ່ພາຍໃຕ້ການປົກຄອງ ທ່ານຈະຖືກສໍາພາດໃນນາມເປັນສ່ວນໜຶ່ງຂອງການສືບສວນ.
- ຕາມກົດໝາຍແລ້ວ, ເດັກນ້ອຍອາດຈະຖືກສໍາພາດ ແລະ ອາດຈະມີການຖ່າຍຮູບໃນນາມເປັນສ່ວນໜຶ່ງຂອງການສືບສວນໂດຍບໍ່ຈໍາເປັນຕ້ອງມີການອະນຸຍາດຈາກທ່ານ. ເດັກນ້ອຍມີສິດທີ່ຈະໃຫ້ບຸກຄົນທີສາມທີ່ຕົນເລືອກເຂົ້າຮ່ວມໃນລະຫວ່າງການສໍາພາດຂອງເຂົາເຈົ້າ.
- ຈະມີການລວບລວມຂໍ້ມູນຜ່ານການໄດ້ຮັບບັນທຶກຕ່າງໆ ແລະ ການດໍາເນີນການສໍາພາດຜູ້ຕິດຕໍ່ທີ່ສໍາຄັນຈໍານວນຫຼາຍຄົນ.
- ເມື່ອການກ່າວຫາມີອົງປະກອບຂອງການກະທໍາຜິດທາງອາຍາ, ຜູ້ສືບສວນຂອງ CPS ອາດຈະເຮັດວຽກເປັນໝູ່ຄະນະກັບເຈົ້າໜ້າທີ່ຕໍາຫຼວດ ເພື່ອຫຼຸດຜ່ອນການເກັບກໍາຂໍ້ມູນແບບຊໍ້າຊ້ອນ.
- ອາດຈະມີການສະເໜີການບໍລິການຕ່າງໆເພື່ອຕອບສະໜອງຄວາມຕ້ອງການຂອງຄອບຄົວຂອງທ່ານ, ຫຼຸດຜ່ອນຄວາມສ່ຽງ ແລະ ຂໍ້ກັງວົນກ່ຽວກັບຄວາມປອດໄພຕ່າງໆ ຫຼື ກໍລະນີຂອງທ່ານອາດຈະຖືກສົ່ງຕໍ່ໄປໃຫ້ Family Voluntary Services (ການບໍລິການອາສາສະໝັກຮັບໃຊ້ຄອບຄົວ; FVS) ເພື່ອຕິດຕາມກວດກາ.

## ຜົນຂອງການສືບສວນແມ່ນຫຍັງ?

ການກ່າວຫາອາດຈະ "ຄົ້ນພົບ" ຫຼື "ຄົ້ນບໍ່ພົບ". ຜົນຂອງການສືບສວນທີ່ຄົ້ນພົບ ໝາຍຄວາມວ່າ ອີງຕາມຂໍ້ມູນທີ່ມີຢູ່ ເຫັນວ່າມີຄວາມເປັນໄປໄດ້ຫຼາຍກວ່າ ທີ່ມີການລ່ວງລະເມີດ ຫຼື ການປ່ອຍປະລະເລີຍເດັກເກີດຂຶ້ນ. ຄົ້ນບໍ່ພົບ ໝາຍຄວາມວ່າ ອີງຕາມຂໍ້ມູນທີ່ມີຢູ່ ເຫັນວ່າມີຄວາມເປັນໄປໄດ້ຫຼາຍກວ່າ ທີ່ບໍ່ມີການລ່ວງລະເມີດ ຫຼື ການປ່ອຍປະລະເລີຍເດັກເກີດຂຶ້ນ ຫຼື ບໍ່ມີຫຼັກຖານພຽງພໍເພື່ອຕັດສິນວ່າ ການກ່າວຫານັ້ນໄດ້ເກີດຂຶ້ນ ຫຼື ບໍ່ເກີດຂຶ້ນ.

## ຂ້າພະເຈົ້າຈະໄດ້ຮັບແຈ້ງຜົນຂອງການສືບສວນແນວໃດ?

ຈະມີການສົ່ງຈົດໝາຍໄປແຈ້ງໃຫ້ທ່ານຊາບກ່ຽວກັບຜົນຂອງການສືບສວນ. ຖ້າຫາກວ່າຜົນຂອງການສືບສວນແມ່ນ ຄົ້ນພົບ, ຈົດໝາຍສະບັບດັ່ງກ່າວ ຈະບອກທ່ານເຖິງວິທີການຂໍອຸທອນຜົນຂອງການສືບສວນ. ການອຸທອນນີ້ ຕ້ອງສົ່ງເຖິງຫ້ອງການ DCYF ພາຍໃນ 30 ວັນນັບຕັ້ງແຕ່ວັນໄດ້ຮັບຈົດໝາຍແຈ້ງຜົນຂອງການສືບສວນ ບໍ່ດັ່ງນັ້ນຜົນຂອງການສືບສວນຈະໃຊ້ໄດ້ຢ່າງເດັດຂາດ. ເຮັດໃຫ້ແນ່ໃຈວ່າ ຖ້າທ່ານມີການຍົກຍ້າຍ ໃຫ້ແຈ້ງທີ່ຢູ່ໃໝ່ຂອງທ່ານໃຫ້ພະນັກງານຮັບຜິດຊອບກໍລະນີຊາບ.

## ຜົນຂອງການສືບສວນທີ່ຄົ້ນພົບ ຈະສົ່ງຜົນກະທົບຕໍ່ຂ້າພະເຈົ້າຄືແນວໃດ?

ຜົນຂອງການສືບສວນທີ່ຄົ້ນພົບ ຈະຖືກເກັບຮັກສາໄວ້ເປັນຄວາມລັບຢູ່ໃນລະບົບຄອມພິວເຕີຂອງ DCYF. ເຊິ່ງຈະສາມາດນໍາມາໃຊ້ເພື່ອຈຸດປະສົງຕ່າງໆ ດັ່ງຕໍ່ໄປນີ້:

- ຫຼັກຖານໃນການດໍາເນີນຄະດີຂອງສານກ່ຽວກັບລູກຂອງທ່ານ.
- ການຕັດສິນໃຈວ່າ ທ່ານຈະສາມາດໄດ້ຮັບການຈ້າງງານ, ໄດ້ຮັບໃບອະນຸຍາດ ຫຼື ເປັນອາສາສະໝັກເພື່ອເບິ່ງແຍງດູແລເດັກນ້ອຍ ແລະ ຜູ້ໃຫຍ່ທີ່ມີຄວາມສ່ຽງ ຫຼື ບໍ່.
- ຂໍ້ມູນກ່ຽວກັບປະຫວັດຄວາມເປັນມາ ໃນກໍລະນີມີການກ່າວຫາໃນອະນາຄົດ.
- ການຕັດສິນໃຈວ່າ ທ່ານມີເງື່ອນໄຂໄດ້ຮັບການແຕ່ງຕັ້ງເປັນຍາດໃກ້ຊິດ ຫຼື ຍາດພີ່ນ້ອງທີ່ຮັບລ້ຽງລູກບຸນທໍາ ຫຼື ບໍ່.

